# ມິຊຊາອາທິດທີ 3 ກຳນົດພຣະກຣິສຕະຄົມ
# ວັນທີ 11 ທັນວາ 2022



**ພຣະວໍລະສານໂດຍນັກບຸນມັດເທວ 11, 2-11**

ໃນເວລານັ້ນ, ຢວງບັບຕິສຕາຢູ່ໃນຄຸກໄດ້ຍິນເວົ້າເຖິງກິດຈະການຂອງພຣະກຣິສໂຕເຈົ້າ, ເລີຍໃຊ້ລູກສິດສອງຄົນໄປທູນຖາມພຣະອົງວ່າ: ທ່ານຄືຜູ້ທີ່ຈະມານັ້ນບໍ ຫລືຈະໃຫ້ພວກເຮົາຄອງຖ້າຄົນອື່ນອີກ? ພຣະເຢຊູເຈົ້າກ່າວຕອບວ່າ: ຈົ່ງໄປບອກຢວງບັບຕິສຕາເຖິງສິ່ງທີ່ພວກເຈົ້າໄດ້ຍິນແລະໄດ້ເຫັນ: ຄົນຕາບອດເຫັນຮຸ່ງ, ຄົນເປັ້ຍຍ່າງໄດ້, ຄົນຂີ້ທູດສະອາດບໍລິສຸດ, ຄົນຫູໜວກໄດ້ຍິນ, ຄົນຕາຍກັບເປັນຄືນມາ, ຄົນທຸກຈົນໄດ້ຮັບຂ່າວປະເສີດ. ບຸນລາບແກ່ຜູ້ທີ່ບໍ່ຖືເອົາເຮົາເປັນສະດຸດ.

ໃນເວລາລູກສິດຂອງຢວງກຳລັງເດີນທາງກັບ, ພຣະເຢຊູເຈົ້າເລີຍກ່າວກັບຝູງຊົນເຖິງຢວງວ່າ: ພວກທ່ານໄປເບິ່ງຫຍັງຢູ່ທີ່ປ່າງວ? ໄປເບິ່ງກົກເລົາທີ່ເໜັງຕີງໄປມາຕາມລົມບໍ? ດັ່ງນັ້ນພວກທ່ານໄປເບິ່ງຫຍັງ? ໄປເບິ່ງຄົນນຸ່ງຫົ່ມເສື້ອຜ້າອ່ອນນວມຈົບງາມບໍ? ຄົນນຸ່ງຫົ່ມເສື້ອຜ້າອ່ອນນວມຈົບງາມກໍມີຢູ່ແຕ່ໃນລາດຊະວັງ. ແຕ່ວ່າພວກທ່ານໄປເບິ່ງຫຍັງແທ້? ໄປເບິ່ງປະພາສົກບໍ? ແມ່ນແລ້ວ ແລະຍັງຍິ່ງກວ່າປະພາສົກອີກດ້ວຍ. ຍ້ອນພຣະຄຳພີໄດ້ກ່າວເຖິງທ່ານຜູ້ນັ້ນວ່າ: ນັ້ນເດ, ເຮົາສົ່ງຜູ້ຖືສານຂອງເຮົາໄປຕຽມທາງໄວ້ລ່ວງໜ້າທ່ານ. ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ໃນບັນດາຜູ້ທີ່ເກີດຈາກຜູ້ຍິງ ບໍ່ມີໃຜຍິ່ງໃຫຍ່ກວ່າຢວງບັບຕິສຕາ. ແຕ່ຜູ້ທີ່ຕ່ຳນ້ອຍທີ່ສຸດໃນອານາຈັກສະຫວັນ ຜູ້ນັ້ນຍັງໃຫຍ່ກວ່າຢວງບັບຕິສຕານັ້ນອີກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້ພວກເຮົາກ້າວເຂົ້າສູ່ອາທິດທີ 3 ກຳນົດພຣະກຣິສຕະຄົມ ຫລືຍັງຮຽກອີກຊື່ໜຶ່ງວ່າ: "ອາທິດແຫ່ງຄວາມຊື່ນຊົມຍິນດີ". ເພາະວາຈາພຣະເຈົ້າວັນອາທິດນີ້ບໍ່ພຽງແຕ່ຊ່ວຍພວກເຮົາໃຫ້ເຂົ້າໃຈເຖິງຈຸດປະສົງຂອງຜູ້ທີ່ຈະສະເດັດມາຄືພຣະເຢຊູກຣິສໂຕເທົ່ານັ້ນ, ແຕ່ຍັງຊ່ວຍພວກເຮົາໃຫ້ມີຄວາມຫວັງແລະຄວາມຍິນດີໃນການສະເດັດກັບມາອີກຄັ້ງໜຶ່ງຂອງພຣະອົງໃນວັນສຸດທ້າຍ. ພຣະອົງມາບໍ່ແມ່ນເພື່ອຕັດສິນແຕ່ເພື່ອຊ່ວຍມະນຸດໃຫ້ຮອດ. ພຣະອົງມາບໍ່ແມ່ນເພື່ອລົງໂທດ ແຕ່ເພື່ອໃຫ້ທຸກຄົນທີ່ເຊື່ອໃນພຣະອົງໄດ້ຫລຸດພົ້ນຈາກແອກຂອງບາບ ແລະກັບຄືນມາຫາພຣະອົງ. ດັ່ງທີ່ພຣະອົງໄດ້ປິ່ນປົວຄົນຕາບອດໃຫ້ເຫັນຮຸ່ງ, ຄົນເປ້ຍໃຫ້ຍ່າງໄດ້, ຄົນຂີ້ທູດໃຫ້ສະອາດບໍລິສຸດ, ຄົນຫູໜວກໃຫ້ໄດ້ຍິນ, ຄົນຕາຍໃຫ້ກັບເປັນຄືນມາ. ກິດຈະການທີ່ພຣະເຢຊູເຈົ້າກະທຳນີ້ແມ່ນເຄື່ອງໝາຍບົ່ງບອກວ່າ ພຣະອົງແມ່ນພຣະຜູ້ກູ້ໄຖ່ທີ່ບັນດາປະພາສົກໄດ້ປ່າວປະກາດໄວ້ລ່ວງໜ້າ.

ວັນອາທິດນີ້ຈະເປັນອາທິດແຫ່ງຄວາມຍິນດີກໍຕໍ່ເມື່ອພວກເຮົາເຂົ້າໃຈວ່າພຣະເຢຊູຜູ້ທີ່ຈະບັງເກີດໃນວັນບຸນໂນແອນທີ່ຈະມາເຖິງນັ້ນແມ່ນຜູ້ທີ່ຈະມາປິ່ນປົວພວກເຮົາໃຫ້ຫາຍຈາກພະຍາດທັງຝ່າຍກາຍແລະຝ່າຍວິນຍານ. ພຣະອົງມາເພື່ອຊ່ວຍເຫລືອຄົນທຸກຈົນ, ຄົນທີ່ສັງຄົມປະຖິ້ມເພື່ອໃຫ້ພວກເຂົາໄດ້ພົບກັບຄຸນຄ່າຂອງຊີວິດແລະຈຸດຢືນໃນສັງຄົມ. ເພາະພວກເຂົາກໍແມ່ນລູກຂອງພຣະເຈົ້າເຊັ່ນດຽວກັນ. ພຣະອົງມາເພື່ອນຳຄວາມຍິນດີແລະສັນຕິສຸກມາໃຫ້ທຸກຄົນ. ເພາະພຣະອົງເປັນກະສັດແຫ່ງສັນຕິສຸກ.

ສ່ວນພວກເຮົາເດ, ພວກເຮົາໄດ້ພົບກັບຄວາມຍິນດີທີ່ແທ້ຈິງຈາກພຣະເຢຊູເຈົ້າແລ້ວຫລືບໍ່? ພວກເຮົາໄດ້ນຳຄວາມຍິນດີຂອງພຣະອົງໄປໃຫ້ຄົນອື່ນບໍ? ພວກເຮົາໄດ້ເປັນເຄື່ອງມືແຫ່ງສັນຕິສຸກຂອງພຣະອົງທ່າມກາງຄອບຄົວ, ສັງຄົມແລະສະຖານທີ່ຊຶ່ງພວກເຮົາດຳລົງຊີວິດບໍ? ຖ້າພວກເຮົາຍັງບໍ່ໄດ້ກະທຳສິ່ງດັ່ງກ່າວ ກໍສະແດງວ່າພວກເຮົາຍັງບໍ່ໄດ້ຮັບຄວາມຍິນດີແລະສັນຕິສຸກຈາກພຣະເຢຊູເຈົ້າ. ຖ້າພວກເຮົາຢາກຮັບຄວາມຍິນດີແລະສັນຕິສຸກທີ່ແທ້ຈິງຈາກພຣະເຢຊູເຈົ້າໃຫ້ພວກເຮົາຫຍັບເຂົ້າຫາພຣະອົງແລະຮັບຮູ້ວ່າຕົນເປັນຄົນອ່ອນແອແລະຄົນພິການທາງວິນຍານ, ເພື່ອພຣະອົງຈະໄດ້ປິ່ນປົວພວກເຮົາຜ່ານທາງວາຈາຂອງພຣະອົງແລະສິນສັກສິດ, ເປັນຕົ້ນແມ່ນສິນອະໄພບາບ.

**ພາວະນາ**

ໂອພຣະເຢຊູ, ພຣະຜູ້ກູ້ໄຖ່ຂອງລູກ ໂຜດປິ່ນປົວດວງໃຈແຂງກະດ້າງຂອງລູກໃຫ້ເປັນດວງໃຈທີ່ບອກງ່າຍສອນຟັງ, ເປັນດວງໃຈກ້ອນຊີ້ນທີ່ຮູ້ຈັກຮັກພຣະອົງແລະຮັກຄົນອື່ນ. ເພື່ອລູກຈະໄດ້ພົບກັບຄວາມຍິນດີແລະສັນຕິສຸກຈາກພຣະອົງໃນວັນບຸນໂນແອນທີ່ຈະມາເຖິງນີ້ເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ